ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສາທາລະນະສຸກ

1280

ເລກທີ /ສທ

ນະຄອນຫຼວງວຽງຈັນ,ວັນທີ 15 NOV 2019

# ຄຳສັ່ງແນະນຳ
## ວ່າດ້ວຍການຢຸດຕິການນຳເຂົ້າ, ຜະລິດ, ແຈກຢາຍ, ບໍລິການ ແລະ ນຳໃຊ້ຜະລິດຕະພັນທີ່ມີສານບາຫຼອດ

**ເຖິງ** : ຫົວໜ້າຫ້ອງການ, ຫົວໜ້າກົມ, ຄະນະອຳນວຍການໂຮງໝໍສູນກາງ, ແຂວງ, ເມືອງ, ພະແນກສາທາລະນະສຸກແຂວງ/ນະຄອນຫຼວງ, ຫ້ອງການສາທາລະນະສຸກເມືອງ/ນະຄອນ ແລະ ສະຖານທີ່ບໍລິການສາທາລະນະສຸກພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ** :ວ່າດ້ວຍການຢຸດຕິການນຳເຂົ້າ, ຜະລິດ, ແຈກຢາຍ, ບໍລິການ ແລະ ນຳໃຊ້ຜະລິດຕະພັນທີ່ມີສານບາຫຼອດ ຢູ່ໃນຂະແໜງການສາທາລະນະສຸກ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍ ອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 08/ສພຊ. ລົງວັນທີ 21 ທັນວາ 2011.
- ອີງຕາມ ໜັງສືຮັບຮອງ ສົນທິສັນຍາມີນາມາຕະ ວ່າດ້ວຍສານບາຫຼອດ ສະບັບລົງວັນທີ 12 ກັນຍາ 2017.

ເພື່ອຈັດຕັ້ງປະຕິບັດ ແລະ ຜັນຂະຫຍາຍ ເນື້ອໃນ ມາດຕາ 19 ການອະນາໄມສະຖານທີ່ບໍລິການສາທາລະນະສຸກ ຂອງກົດໝາຍ ວ່າດ້ວຍ ອະນາໄມ, ກັນພະຍາດ ແລະ ສົ່ງເສີມສຸຂະພາບ ສະບັບເລກທີ 08/ສພຊ, ລົງວັນທີ 21 ທັນວາ 2011 ແລະ ສົນທິສັນຍາ ມີນາມາຕະ ວ່າດ້ວຍສານບາຫຼອດ ສະບັບລົງວັນທີ 12 ກັນຍາ 2017.

ເພື່ອປ້ອງກັນສຸຂະພາບຂອງຄົນ ແລະ ສິ່ງແວດລ້ອມຈາກການກະທຳຂອງມະນຸດ ທີ່ພາໃຫ້ເກີດມີການປ່ອຍສານບາຫຼອດ ແລະ ສານທີ່ມີສ່ວນປະສົມຂອງທາດບາຫຼອດ ລວມທັງແນໃສ່ການຈັດຕັ້ງປະຕິບັດຕົວຈິງໃຫ້ມີປະສິດທິຜົນໃນທ້າຍປີ 2020, ກ່ຽວກັບການຢຸດຕິການນຳເຂົ້າ, ຜະລິດ, ແຈກຢາຍ, ບໍລິການ ແລະ ນຳໃຊ້ຜະລິດຕະພັນ ທີ່ມີສານບາຫຼອດ ຢູ່ຂະແໜງການສາທາລະນະສຸກໃນຂອບເຂດທົ່ວປະເທດ.

## ລັດຖະມົນຕີ ອອກຄຳສັ່ງແນະນຳ:

1. ໃນທ້າຍປີ 2020 ຕ້ອງຢຸດຕິການນຳເຂົ້າ, ຜະລິດ, ແຈກຢາຍ, ບໍລິການ ແລະ ນຳໃຊ້ອຸປະກອນການແພດເຊັ່ນ : ອຸປະກອນວັດແທກຄວາມຮ້ອນ, ຄວາມດັນເລືອດ, ສານອັດແຂ້ວ, ຢາຕ້ານເຊື້ອ ທີ່ມີສານບາຫຼອດເຈືອປົນ ຫຼື ປະສົມສານບາຫຼອດ ຢູ່ໃນສະຖານທີ່ບໍລິການສາທາລະນະສຸກ ແລະ ເຄື່ອງສຳອາງທີ່ມີສານບາຫຼອດເຈືອປົນ ຫຼື ປະສົມສານບາຫຼອດ ຂັ້ນສູນກາງຮອດທ້ອງຖິ່ນທັງພາກສ່ວນລັດ, ເອກະຊົນ ແລະ ອົງການຈັດຕັ້ງສາກົນໃນຂອບເຂດທົ່ວປະເທດ;

2. ສະຖານທີ່ບໍລິການສາທາລະນະສຸກ ທຸກແຫ່ງຕ້ອງເກັບລວບລວມດ້ວຍການຂຶ້ນບັນຊີວັດຖຸອຸປະກອນທຸກຊະນິດທີ່ມີ ສານບາຫຼອດເຈືອປົນ ແລະ ມີສ່ວນປະສົມຂອງສານບາຫລອດ ແລ້ວສັງລວມ ລາຍງານເປັນລາຍລັກອັກສອນໄປຕາມສາຍການຈັດຕັ້ງຄືແຕ່ຂັ້ນສຸກສາລາ/ໂຮງໝໍນ້ອຍ, ໂຮງໝໍຊຸມຊົນ, ຫ້ອງການສາທາລະນະສຸກເມືອງ/ນະຄອນ, ພະແນກສາທາລະນະສຸກແຂວງ/ນະຄອນຫຼວງ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ ແລະ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ ເພື່ອສັງລວມ, ເກັບຮັກສາໄວ້ຢ່າງປອດໄພ ເພື່ອຈະນຳເອົາໄປກຳຈັດ ຫຼື ທຳລາຍໃຫ້ຖືກຕ້ອງຕາມຂໍ້ຕົກລົງການຄຸ້ມຄອງຂີ້ເຫຍື້ອ ຢູ່ສະຖານທີ່ບໍລິການສາທາລະນະສຸກ (ສະບັບເລກທີ 1373/ສທ, ລົງວັນທີ 23/11/2017) ໝວດທີ 4 ການທຳລາຍຂີ້ເຫຍື້ອ ຢູ່ສະຖານທີ່ບໍລິການສາທາລະນະສຸກ, ມາດຕາທີ 21 ການທຳລາຍຂີ້ເຫຍື້ອ ທີ່ມີສານໂລຫະໜັກ, ຂໍ້ທີ 21.1 ວິທີທຳລາຍຂີ້ເຫຍື້ອ ທີ່ມີສານໂລຫະໜັກ;

   1) ການນຳເອົາໄປຜະລິດ ແລ້ວກັບມາໃຊ້ຄືນອີກໂດຍຜ່ານລະບົບອຸດສາຫະກຳສະເພາະ;
   2) ນຳສົ່ງອອກໄປຍັງປະເທດທີ່ມີຄວາມອາດສາມາດໃນການທຳລາຍຂີ້ເຫຍື້ອຈາກສານເຄມີອັນຕະລາຍ. ເງື່ອນໄຂໃນການຂົນສົ່ງ ຕ້ອງປະຕິບັດຕາມສົນທິສັນຍາບາເຊນ (Basel Convention);
   3) ການອັດໃສ່ກ່ອງແໜ້ນ: ໃນກໍລະນີທີ່ທາງເລືອກທັງສອງຢ່າງທີ່ໄດ້ກ່າວມາຂ້າງເທິງຫາກເປັນໄປບໍ່ໄດ້ ແມ່ນໃຫ້ອັດໃສ່ກ່ອງແໜ້ນ ແລ້ວນຳໄປທຳລາຍໃນສະຖານທີ່ໆໄດ້ຮັບການອະນຸມັດຈາກໜ່ວຍງານທີ່ກ່ຽວຂ້ອງ ແລະ ວິທີການອັດໃສ່ກ່ອງແໜ້ນ ຕ້ອງໃຫ້ໄປຕາມຂໍ້ແນະນຳຂອງອົງການອະນາໄມໂລກ;
   4) ຂີ້ເຫຍື້ອຊະນິດນີ້ ແມ່ນຫ້າມບໍ່ໃຫ້ມີການຈູດເຜົາເດັດຂາດ ຖ້າຫາກບໍ່ໄດ້ອັດກ່ອງແໜ້ນ ຍ້ອນອາດເກີດມົນລະພິດທາງອາກາດ ແລະ ທາງນ້ຳ.

3. ສະຖານທີ່ບໍລິການສາທາລະນະສຸກທຸກແຫ່ງ ຕ້ອງຂື້ນແຜນຈັດຊື້ ແລະ ນຳໃຊ້ວັດຖຸອຸປະກອນອື່ນທີ່ບໍ່ມີສານບາຫລອດເຈືອປົນແທນ ເພື່ອປ້ອງກັນຜົນກະທົບທາງລົບຕໍ່ສຸຂະພາບຂອງພະນັກງານ, ປະຊາຊົນ ແລະ ປົນເປື້ອນໃສ່ສິ່ງແວດລ້ອມ ເຊັ່ນ : ທົດແທນເຄື່ອງວັດແທກອຸນຫະພູມ ແລະ ຄວາມດັນເລືອດ ດ້ວຍອຸປະກອນທີ່ປອດໄພ ແລະ ຊັດເຈນ, ຫາຊື້ໄດ້  ໂດຍພິຈາລະນາດ້ານເຕັກໂນໂລຊີ, ງົບປະມານການຈັດຊື້ ແລະ ຄວາມປອດໄພ, ຊຶ່ງອຸປະກອນການແພດ ຊຶ່ງມີລາຍລະອຽດດັ່ງລຸ່ມນີ້:

   1) ອຸປະກອນທົດແທນວັດແທກຄວາມຮ້ອນ ອາດຈະໃຊ້ອຸປະກອນທີ່ເປັນແບບດີຈີຕອນ ຫຼື ເອເລັກໂຕຣນິກ;
   2) ອຸປະກອນວັດແທກຄວາມດັນເລືອດ ອາດຈະໃຊ້ອຸປະກອນທີ່ເປັນແບບເຂັມໝູນ ຫຼື ແບບ ດີຈີຕອນ;
   3) ສານອັດແຂ້ວທົດແທນ ເປັນຕົ້ນ Composite, Glasionomer ແລະ Abhesor.

4. ສ້າງຕັ້ງຄະນະກຳມະການຮັບຜິດຊອບດ້ານການຢຸດຕິການນຳເຂົ້າ, ນຳໃຊ້, ແຈກຢາຍ ແລະ ບໍລິການອຸປະກອນການແພດ, ສານອັດແຂ້ວທີ່ມີສານບາຫຼອດ ຫຼື ປະສົມສານບາຫຼອດຢູ່ໃນທຸກສະຖານທີ່ບໍລິການສາທາລະນະສຸກ ແລະ ເຄື່ອງສຳອາງທີ່ມີສານບາຫຼອດ ແລະ ຢາຕ້ານເຊື້ອ ເພື່ອບັນລຸຈຸດປະສົງ ແລະ ເປົ້າໝາຍ ໃຫ້ໄດ້ ໃນທ້າຍປີ 2020 ຂອງສົນທິສັນຍາວ່າດ້ວຍມີນາມາຕະ;

5. ສ້າງແຜນ, ຕິດຕາມຊຸກຍູ້, ປະເມີນຜົນ ແລະ ລາຍງານຕາມສາຍທີ່ຕົນເອງຂຶ້ນກັບ ແລະ ຂັ້ນເທິງເປັນແຕ່ລະໄລຍະ ຄື ທຸກໆ 6 ເດືອນ ແລະ ໃນເດືອນ 10 ຂອງປີ 2020;

6. ມອບໃຫ້ ກົມອະນາໄມ ແລະ ສົ່ງເສີມສຸຂະພາບ, ກົມປິ່ນປົວ ແລະ ຟື້ນຟູໜ້າທີ່ການ, ກົມອາຫານ ແລະ ຢາ, ສູນສະໜອງຢາ ແລະ ອຸປະກອນການແພດ, ເປັນເຈົ້າການໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ຢ່າງຕັ້ງໜ້າ ໂດຍປະສານງານກັບທຸກພາກສ່ວນທີ່ກ່ຽວ ຂ້ອງ;

7. ຄຳສັ່ງແນະນຳສະບັບນີ້ ມີຜົນສັກສິດນັບແຕ່ ວັນທີລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີ

ຮສ ດຣ. ບຸນກອງ ສີຫາວົງ